ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ກົມແຜນການ ແລະ ການເງິນ
ຄະນະຮັບຜິດຊອບໂຄງການຈັດຊື້-ຈັດຈ້າງ

ເລກທີ..953.../ກຜງ
ນະຄອນຫຼວງວຽງຈັນ, ວັນທີ 4.5.2026

## ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍຕາງໜ້າ ກົມແຜນການ ແລະ ການເງິນ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ທີ່ດຳເນີນກິດຈະການດ້ານອຸປະກອນໄອທີ ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງ ສະໜອງ ຊອບແວລະບົບຄຸ້ມຄອງຊັບສິນຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ ທັນເປັນທັນສະໄໝ ປະຈຳປີ 2026, ໄລຍະເວລາມອບຮັບໂຄງການ 60 ວັນ.
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງອຸປະກອນໄອທີ;
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ກົມແຜນການ ແລະ ການເງິນ, ຫ້ອງ 403 ຊັ້ນ 04, ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ: ຈັນທະບູລີ,ນະຄອນຫລວງວຽງຈັນ, ເບີໂທຕິດຕໍ່: 020 97842489, 020 55585544 ຈະເລີ່ມຂາຍຊອງແຕ່ວັນທີ 05 ພຶດສະພາ 2026 ເຖິງວັນທີ 09 ມີຖຸນາ 2026 (ໃນໂມງລັດຖະການ), ໃນລາຄາ 2,500,000 ກີບ/ຊອງ ( ສອງລ້ານຫ້າແສນກີບ), ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 09 ມິຖຸນາ 2026 ທີ່ຫ້ອງປະຊຸມຊັ້ນ 02, ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ: ຈັນທະບູລີ,ນະຄອນຫລວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນທີ 09 ມິຖຸນາ 2026 ໂດຍສ່ອງໜ້າຄະນະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງມູນຄ່າທີ່ສະເໜີ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າກົມແຜນການ ແລະ ການເງິນ
(ຫົວໜ້າຄະນະຮັບຜິດຊອບໂຄງການ ຈັດຊື້-ຈັດຈ້າງ)

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ກົມແຜນການ ແລະ ການເງິນ

ສຸດໃຈ ພົມມະສີ

สแกนด้วย CamScanner